ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ນາຍົກລັດຖະມົນຕີ

ເລກທີ 636 /ນຍ

ນະຄອນຫຼວງວຽງຈັນ, ວັນທີ 26. ພະຈິກ. 2021

# ດຳລັດ
## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ
## ຂອງກະຊວງແຜນການ ແລະ ການລົງທຶນ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ2016;
- ອີງຕາມ ມະຕິກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 09/ສພຊ, ລົງວັນທີ 22 ມີນາ 2021 ວ່າດ້ວຍການຮັບຮອງເອົາໂຄງປະກອບກົງຈັກ ແລະ ບຸກຄະລາກອນຂອງລັດຖະບານ;
- ອີງຕາມ ໜັງສືສະເໜີ ຂອງກະຊວງ ແຜນການ ແລະ ການລົງທຶນ ສະບັບເລກທີ 1459/ຜທ, ລົງວັນທີ 23 ສິງຫາ 2021;
- ອີງຕາມ ໜັງສືສະເໜີ ຂອງກະຊວງພາຍໃນ ສະບັບເລກທີ 204/ພນ, ລົງວັນທີ 31 ສິງຫາ 2021.

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ 1
### ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ດຳລັດສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ, ຫຼັກການ ແລະ ແບບແຜນວິທີເຮັດວຽກ ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານ ຂອງກະຊວງແຜນການ ແລະ ການລົງທຶນ ແນໃສ່ຈັດຕັ້ງຜັນຂະຫຍາຍແນວທາງນະໂຍບາຍຂອງພັກ, ປະຕິບັດກົດໝາຍ ແລະ ລະບຽບການຂອງລັດໃນການຄຸ້ມຄອງ ແລະ ພັດທະນາຂະແໜງແຜນການ ແລະ ການລົງທຶນ ແລະ ລະບົບສະຖິຕິແຫ່ງຊາດ ໃນຂອບເຂດທົ່ວປະເທດ.

**ມາດຕາ 2 ທີ່ຕັ້ງ ແລະ ພາລະບົດບາດ**

ກະຊວງແຜນການ ແລະ ການລົງທຶນ ຂຽນເປັນຕົວອັກສອນຫຍໍ້ວ່າ "ກຜທ" ຂຽນເປັນພາສາອັງກິດ "Ministry of Planning and Investment" ຂຽນເປັນຕົວອັກສອນຫຍໍ້ວ່າ "MPI" ແມ່ນກົງຈັກໜຶ່ງ ຂອງລັດຖະບານ, ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະບານ ໃນການຄຸ້ມຄອງມະຫາພາກ ກ່ຽວກັບ ວຽກງານແຜນການ ແລະ ການລົງທຶນ, ວຽກງານສະຖິຕິແຫ່ງຊາດ, ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ ແລະ ເຂດເສດຖະກິດພິເສດ ໃນຂອບເຂດທົ່ວປະເທດ.

## ໝວດທີ 2

### ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3 ໜ້າທີ່**

ໜ້າທີ່ ຂອງກະຊວງແຜນການ ແລະ ການລົງທຶນ ມີດັ່ງນີ້:

1. ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ມະຕິຂອງສະພາແຫ່ງຊາດ, ລັດຖະບັນຍັດ ຂອງປະທານປະເທດ, ດຳລັດ, ລັດຖະດຳລັດ, ມະຕິ ແລະ ນິຕິກຳລຸ່ມກົດໝາຍຂອງລັດຖະບານ;
2. ຄົ້ນຄວ້າຫັນເອົາແນວທາງແຜນນະໂຍບາຍຂອງພັກ ແລະ ມະຕິຕົກລົງຂອງລັດຖະບານກ່ຽວກັບວຽກງານແຜນການ ແລະ ການລົງທຶນ ມາເປັນວິໄສທັດ, ຍຸດທະສາດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດໄລຍະ 5 ປີ, ປະຈຳປີ, ແຜນການ, ແຜນງານ ແລະ ໂຄງການລະອຽດ ໃນແຕ່ລະປີ ແລະ ຮັບຜິດ ຊອບນຳພາ-ຊີ້ນຳ ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ໃຫ້ປະກົດຜົນເປັນຈິງ ບັນລຸໄດ້ເປົ້າໝາຍ ແລະ ຄາດໝາຍສູ້ຊົນ ແຕ່ລະໄລຍະ ແລະ ມີປະສິດທິຜົນ;
3. ຄົ້ນຄວ້າສ້າງ, ປັບປຸງກົດໝາຍ, ດຳລັດ ແລະ ນິຕິກຳລຸ່ມກົດໝາຍ ຂອງຂະແໜງແຜນການ ແລະ ການລົງທຶນ ເພື່ອສະເໜີຕໍ່ລັດຖະບານ, ພິຈາລະນາພ້ອມທັງຕິດຕາມກວດກາການຈັດຕັ້ງປະຕິບັດ;
4. ເປັນເຈົ້າການສ້າງ, ຊຸກຍູ້, ຕິດຕາມກວດກາ, ປະເມີນ ສະຫຼຸບຕີລາຄາ ການຈັດຕັ້ງປະຕິບັດວິໄສທັດ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ແຜນການລົງທຶນຂອງລັດ, ແຜນງານ, ໂຄງການລະອຽດ ໃນແຕ່ລະໄລຍະໂດຍການປະສານສົມທົບກັບທຸກຂະແໜງການ ແລະ ທ້ອງຖິ່ນ ເພື່ອສະເໜີລັດຖະບານ ນຳສະເໜີຕໍ່ສະພາແຫ່ງຊາດ ພິຈາລະນາ ແລະ ຮັບຮອງເອົາ;
5. ຊີ້ນຳດ້ານວິຊາການກ່ຽວກັບວຽກງານແຜນການ, ການປະເມີນໂຄງການລົງທຶນຂອງລັດ, ວຽກຮ່ວມມືສາກົນ, ວຽກສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂອງພາກເອກະຊົນ, ວຽກສົ່ງເສີມ ແລະ ຄຸ້ມຄອງເຂດເສດຖະກິດພິເສດ ແລະ ວຽກສະຖິຕິ ໃຫ້ບັນດາຂະແໜງການຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອຄວາມເປັນເອກະພາບໃນການຈັດຕັ້ງປະຕິບັດ;
6. ຄົ້ນຄວ້າເຊື່ອມສານນະໂຍບາຍເພື່ອຫຼຸດຜ່ອນຄວາມສ່ຽງ ຈາກໄພພິບັດທຳມະຊາດ ເຂົ້າໃນແຜນພັດທະນາເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ, ຄົ້ນຄ້ວາສັງລວມການສະເໜີໂຄງການແກ້ໄຂສຸກເສີນ ແລະ ໂຄງການຟື້ນຟູ ຜົນກະທົບຈາກໄພພິບັດຕາມການສະເໜີຂອງບັນດາຂະແໜງການ ແລະ ທ້ອງຖິ່ນພ້ອມທັງຕິດຕາມ, ຊຸກຍູ້ ແລະ ສະຫຼຸບລາຍງານການຈັດຕັ້ງປະຕິບັດຕໍ່ລັດຖະບານ;
7. ເປັນໃຈກາງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ, ວິເຄາະ-ວິໄຈ, ຄາດຄະເນ ທ່າອ່ຽງການຂະຫຍາຍຕົວຂອງເສດຖະກິດ, ກຳນົດຄາດໝາຍລວມ, ເປົ້າໝາຍຕົ້ນຕໍ ແລະ ການດຸ່ນດ່ຽງດ້ານມະຫາພາກ ເພື່ອຮັບໃຊ້ໃຫ້ແກ່ການສ້າງແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ ໄລຍະ 5 ປີ ແລະ ປະຈຳປີ;
8. ປະເມີນໂຄງການລົງທຶນຂອງລັດ ກ່ອນການພິຈາລະນາເຂົ້າແຜນການລົງທຶນ ແລະ ປະເມີນໂຄງການລົງທຶນ ຂອງລັດ, ປະເມີນໂຄງການລົງທຶນຂອງລັດ ໃນໄລຍະຈັດຕັ້ງປະຕິບັດ, ປະເມີນຜົນໂຄງການສຳເລັດ 100% ກ່ອນການມອບ-ຮັບ ແລະ ປະເມີນໂຄງການພາຍຫລັງການນຳໃຊ້ແຕ່ 2-5 ປີ;
9. ຕິດຕາມການຈັດຕັ້ງປະຕິບັດບັນດານະໂຍບາຍ ແລະ ມາດຕະການທີ່ກ່ຽວພັນກັບການພັດທະນາເສດຖະກິດ-ສັງຄົມ ແລະ ແຜນການລົງທຶນຂອງລັດ ໃນແຕ່ລະໄລຍະ, ຄົ້ນຄວ້າມາດຕະການຄຸ້ມຄອງດ້ານເສດຖະກິດມະຫາພາກ ແລະ ນະໂຍບາຍແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ, ນະໂຍບາຍການລຶບລ້າງຄວາມທຸກຍາກ, ນະໂຍບາຍການຫຼຸດພົ້ນອອກຈາກສະຖານະພາບປະເທດດ້ອຍພັດ